ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຖອນໃບອະນຸຍາດດຳເນີນທຸລະກິດ ແລະ ປິດການບໍລິການແລກປ່ຽນເງິນຕາຮ້ານແລກປ່ຽນເງິນຕາຕົວແທນທີ່ປະຕິບັດບໍ່ສອດຄ່ອງຕາມລະບຽບການ

ໃນໄລຍະທ້າຍປີ 2021 ທຫລ ໄດ້ຫັນຮ້ານແລກປ່ຽນເງິນຕາທີ່ໄດ້ຮັບອະນຸຍາດທັງໝົດ 550 ຮ້ານ ເປັນຕົວແທນທະນາຄານທຸລະກິດ ໃນການໃຫ້ບໍລິການ ແລກປ່ຽນເງິນຕາ ໄດ້ 419 ຮ້ານ ສຳເລັດ ໃນວັນທີ 31 ສິງຫາ 2021, ສ່ວນທີ່ເຫຼືອຈຳນວນ 131 ຮ້ານ ແມ່ນໄດ້ຖອນໃບອະນຸຍາດດຳເນີນທຸລະກິດ ແລະ ປິດການບໍລິການ. ຜ່ານການຕິດຕາມ-ກວດກາຮ້ານແລກປ່ຽນເງິນຕາຕົວແທນ ເຫັນວ່າສ່ວນຫຼາຍແມ່ນເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບ ການເປັນຕົວແທນ ຂອງທະນາຄານທຸລະກິດ, ຈຳນວນຮ້ານແລກປ່ຽນດັ່ງກ່າວ ກໍມີຫຼາຍເກີນໄປບໍ່ສົມຄູ່ກັບປະສິດທິຜົນທີ່ໄດ້ຮັບ.

ດັ່ງນັ້ນ, ເພື່ອເຮັດໃຫ້ການແລກປ່ຽນເງິນຕາເຂົ້າສູ່ລະບົບທະນາຄານຫຼາຍຍິ່ງຂຶ້ນ ຄຽງຄູ່ກັບການປັບປຸງການບໍລິການແລກປ່ຽນເງິນຕາແກ່ສັງຄົມໃຫ້ສອດຄ່ອງຕາມລະບຽບການ, ທຫລ ຈຶ່ງໄດ້ມີການ ປະເມີນການເຄື່ອນໄຫວທຸລະກິດຂອງຮ້ານແລກປ່ຽນເງິນຕາຕົວແທນທົ່ວປະເທດ ແລະ ຖອນໃບອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາຂອງຮ້ານແລກປ່ຽນເງິນຕາຕົວແທນທີ່ເຄື່ອນໄປບໍ່ມີປະສິດທິພາບ ແລະ ປະຕິບັດບໍ່ສອດຄ່ອງຕາມລະບຽບການ. ມາຮອດເດືອນ ກັນຍາ 2022 ທຫລ ໄດ້ຖອນໃບອະນຸຍາດດຳເນີນ ທຸລະກິດຮ້ານແລກປ່ຽນເງິນຕາຕົວແທນ ຈຳນວນ 306 ຮ້ານ (ຢູ່ນະຄອນຫຼວງວຽງຈັນ 123 ຮ້ານ ແລະ ຢູ່ຕ່າງແຂວງ 183 ຮ້ານ) ເຮັດໃຫ້ປັດຈຸບັນຮ້ານແລກປ່ຽນເງິນຕາຕົວແທນມີຈຳນວນ 113 ຮ້ານ (ຢູ່ນະຄອນຫຼວງວຽງຈັນ 76 ຮ້ານ ແລະ ຢູ່ຕ່າງແຂວງ 37 ຮ້ານ) ຈາກ 419 ຮ້ານໃນທົ່ວປະເທດ, ຊຶ່ງຮ້ານແລກປ່ຽນເງິນຕາຕົວແທນທີ່ຍັງສາມາດເຄື່ອນໄຫວບໍລິການ ແລກປ່ຽນເງິນຕາໄດ້ເຜີຍແຜ່ໃຫ້ສັງຄົມຮັບຊາບ ຕາມແຈ້ງການຂອງຫ້ອງການ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 340/ຫກ, ລົງວັນທີ 14 ພະຈິກ 2022 ເຖິງຢ່າງໃດກໍ່ຕາມ ທຫລ ຈະເພີ່ມທະວີການຕິດຕາມ ແລະ ກວດ ກາຢ່າງໃກ້ຊິດ ແລະ ສືບຕໍ່ປະເມີນການເຄື່ອນໄຫວຂອງຮ້ານແລກປ່ຽນເງິນຕາຕົວແທນ ແລະ ຄັດເອົາແຕ່ຮ້ານແລກປ່ຽນເງິນຕາທີ່ມີຄຸນນະພາບ ແລະ ສາມາດປະຕິບັດຕາມເງື່ອນໄຂ ແລະ ລະບຽບການຂອງ ທະນາຄານແຫ່ງ ສປປ ລາວ ວາງອອກແຕ່ລະໄລຍະເທົ່ານັ້ນ, ໃນການອະນຸຍາດໃຫ້ບໍລິການແລກປ່ຽນ ເງິນຕາແກ່ສັງຄົມ.

ສະນັ້ນ, ເພື່ອເປັນການປະກອບສ່ວນຈາກສັງຄົມເຂົ້າໃນວຽກງານດັ່ງກ່າວ ຮຽກຮ້ອງເຖິງບັນດາພໍ່ແມ່ປະຊາຊົນທົ່ວສັງຄົມ ກໍລະນີຫາກທ່ານພົບເຫັນການບໍລິການແລກປ່ຽນເງິນຕາຂອງຮ້ານແລກປ່ຽນເງິນຕາ ທີ່ບໍ່ສອດຄ່ອງຕາມລະບຽບກົດໝາຍ ໂດຍສະເພາະບໍ່ມີປ້າຍຮ້ານແລກປ່ຽນເງິນຕາຕົວແທນທະນາຄານທຸລະກິດ; ນຳໃຊ້ບັນຊີສ່ວນບຸກຄົນ ຫຼື ບັນຊີທຸລະກິດອື່ນ ເຂົ້າໃນການແລກປ່ຽນເງິນຕາ, ມີການ

ປະຕິບັດອັດຕາແລກປ່ຽນສູງກວ່າທະນາຄານທຸລະກິດ ທີ່ຂຶ້ນເປັນຕົວແທນ ທ່ານສາມາດແຈ້ງ ຫຼື ສະໜອງຂໍ້ມູນດັ່ງກ່າວໃຫ້ກັບ ທະນາຄານແຫ່ງ ສປປ ລາວ (ເບີໂທ 021 264 590) ເພື່ອເປັນຂໍ້ມູນດຳເນີນການຕິດຕາມກວດກາ ແລະ ດຳເນີນມາດຕະການຕໍ່ພາກສ່ວນດັ່ງກ່າວຕາມກົດໝາຍ. ການຮ່ວມມືຂອງພໍ່ແມ່ປະຊາຊົນ, ບຸກຄົນ ແລະ ການຈັດຕັ້ງແມ່ນເປັນການປະກອບສ່ວນສຳຄັນ ເຂົ້າໃນການສ້າງສັງຄົມໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສົ່ງເສີມການດຳເນີນທຸລະກິດ ໃຫ້ມີຄວາມຍຸດຕິທຳທີ່ຖືກຕ້ອງຕາມກົດໝາຍ ແລະ ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ໃຫ້ມີຄວາມໝັ້ນຄົງ ແລະ ເຂັ້ມແຂງຍິ່ງຂຶ້ນ.

ຂ່າວ: ກົມນະໂຍບາຍເງິນຕາ ທຫລ

*ຢູ່ເມືອງລາວໃຊ້ເງິນກີບລາວ*